ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຖ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VILLAGE VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116
FAX:451117 E-mail:Lcc@laocement.com,www.laocement.com

ເລກທີ: 087 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ: 24 MAR 2023

ຮຽນ : - ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ
: - ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ
: - ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ

- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວມະຫາຊົນ ສະບັບເລກທີ 1958/ກປທ ລົງວັນທີ 21/4/2022.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດລາຍງານມາຍັງທ່ານ ເພື່ອຊາບ ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດແຜນຟື້ນຟູກິດຈະການ ນັບແຕ່ບໍລິສັດ ໄດ້ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດດັ່ງນີ້:

1. ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ, ທາງບໍລິສັດໄດ້ສະເໜີຂໍປ່ຽນຊື່ບໍລິສັດ, ປ່ຽນຂອບເຂດທຸລະກິດ ແລະ ຕໍ່ອາຍຸສັນຍາການລົງທຶນຕາມລະບຽບການຂອງລັດຖະບານ, ສ່ວນເອກະສານຂໍສະເໜີດັ່ງກ່າວໄດ້ຍື່ນຕໍ່ພາກສ່ວນທີ່ກ່ຽວຂ້ອງຢ່າງຄົບຖ້ວນແລ້ວ, ກຳລັງລໍຖ້າການພິຈາລະນາ ແລະ ແຈ້ງຕອບຈາກພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ.
   - ຂາຮຸ້ນໃໝ່ (ບໍລິສັດຊຽນຫານ ຢຸນນານ) ຈະປະຕິບັດຕາມສັນຍາການຊື້ຂາຍຮຸ້ນທີ່ເຊັນກັບບໍລິສັດ ຫຼັກຊັບລາວ - ຈີນ ຈຳກັດ (ໃນສັນຍາໄດ້ລະບຸໄວ້ວ່າຈຳນວນຮຸ້ນຊື້ຂາຍ ແລະ ລາຄາຮຸ້ນ) ຄາດຄະເນວ່າຈະສຳເລັດການຊື້-ຂາຍຮຸ້ນໃນທ້າຍເດືອນ 9/2023.
   - ຂາຮຸ້ນໃໝ່ (ບໍລິສັດຊຽນຫານ ຢຸນນານ) ຈະສະເໜີຊື້ຮຸ້ນຈາກຜູ້ຖືຮຸ້ນລາຍຍ່ອຍຕາມລະບຽບຂອງຕະຫຼາດຫຼັກຊັບລາວຄາດຄະເນວ່າຈະສຳເລັດການຊື້-ຂາຍຮຸ້ນໃນທ້າຍເດືອນ 9/2023.
2. ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ, ບໍລິສັດໄດ້ຕັ້ງໜ້າກະກຽມແຜນການດັດສ້າງໂຮງງານໃນໄລຍະເບື້ອງຕົ້ນ ເຊັ່ນ : ໄດ້ເຊັນສັນຍາກັບສະຖາບັນການອອກແບບແຂວງຢຸນນານ ເພື່ອມອບວຽກການອອກແບບໃຫ້ແກ່ສະຖາບັນການອອກແບບ, ເຊິ່ງສະຖາບັນການອອກແບບໄດ້ສຳຫຼວດສະຖານທີ່ຂອງໂຮງງານສຳເລັດແລ້ວ ກຳລັງສ້າງແຜນການອອກແບບຂອງໂຮງງານໃຫ້ສົມບຸນ.
3. ບໍລິສັດຈະຮື້ຖອນ ແລະ ປຸກສ້າງສຳນັກງານຂອງບໍລິສັດຄືນໃໝ່, ໂດຍໂຄງການດັ່ງກ່າວກຳລັງຢູ່ໃນຂັ້ນຕອນສຳຫຼວດທີ່ດິນ ແລະຈະດຳເນີນໂຄງການດັ່ງກ່າວຢ່າງເປັນທາງການໃນຕົ້ນເດືອນ 4 ຫາ ເດືອນ 5 ປີ 2023, ຕາມແຜນການກໍ່ສ້າງ ສຳນັກງານຂອງບໍລິສັດໃໝ່ຈະມີຄວາມສູງ 20 ຊັ້ນ ກວມເນື້ອທີ່ດິນປະມານ 18000 ㎡.
4. ເພື່ອໃຫ້ອຸປະກອນ ແລະ ກົນຈັກທີ່ມີຢູ່ໃນໂຮງງານສາມາດສືບຕໍ່ສ້າງຜົນປະໂຫຍດໃຫ້ແກ່ບໍລິສັດ, ຜ່ານການສຶກສາຄົ້ນຄວ້າຈາກຄະນະອຳນວຍການບໍລິສັດ, ຈຶ່ງເຫັນດີຕົກລົງຍົກຍ້າຍໂຮງງານຊີມັງວັ

สแกนด้วย CamScanner

ວຽງ ຫຼັງ 2 ໄປຕັ້ງຢູ່ເຂດອຸດສາຫະກຳຊັບພະຍາກອນປຸງໃໝ່ ເຊິ່ງຈະນຳເອົາອຸປະກອນ ແລະ ກົນຈັກ ດັ່ງກ່າວໄປລົງທຶນ ແລະ ພັດທະນາສູນເກັບຄືນໂລຫະມີສີ ແລະ ສູນປຸງແຕ່ງບໍ່ແຮ່ໃນໄລຍະເບື້ອງຕົ້ນ.

5. ອີງຕາມຄວາມຕ້ອງການດ້ານຮູບແບບຂອງທຸລະກິດໃໝ່ ທາງບໍລິສັດໄດ້ປັບປຸງໂຄງຮ່າງການຈັດຕັ້ງ, ພະນັກງານ, ລະບົບການຄຸ້ມຄອງພາຍໃນຂອງບໍລິສັດໃຫ້ເໝາະສົມ ແລະ ທັນສະໄໝກວ່າເກົ່າ.

ຈາກການລາຍງານຂັ້ນເທິງນີ້ທາງ ຄະນະອຳນວຍການບໍລິສັດ ຈະປະຕິບັດຕາມແຜນການປັ້ງປຸງ ແລະ ຟື້ນຟູທຸລະກິດໃຫ້ປະສົບຜົນສຳເລັດຕາມຄາດໝາຍ, ສືບຕໍ່ປະຕິບັດວຽກງານໃນການບໍລິຫານ ແລະ ການ ດຳເນີນທຸລະກິດ, ປະສົມປະສານ ຫຼືນຳໃຊ້ ຊັບພະຍາກອນຕ່າງໆຂອງບໍລິສັດທີ່ມີຢູ່ໃຫ້ເກີດຜົນ, ພ້ອມ ປັບປຸງຟື້ນຟູສະພາບການດຳເນີນທຸລະກິດຂອງບໍລິສັດ ແລະ ສ້າງເສັ້ນທາງອັນໃຫມ່ສຳລັບການພັດທະນາ ຢ່າງຮອບດ້ານຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຊາບ.

ຮຽນມາດ້ວຍຄວາມເຄົາລົບ ແລະນັບຖືຢ່າງສູງ.

ບໍລິສັດຜູ້ອຳນວຍການບໍລິສັດ

ຊີມັງລາວ ມະຫາຊົນ
Lao Cement Public Company

ເນ້ຍເຫຼ້ຍ

ສแกนด้วย CamScanner